ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ.....1971...../ກງ

ນະຄອນຫຼວງວຽງຈັນ, ວັນທີ...19...ເມສາ.....໒໐໒໑

# ແຈ້ງການ

**ຮຽນ** : ບັນດາທ່ານລັດຖະມົນຕີກະຊວງ, ຫົວໜ້າອົງການ, ອົງການປົກຄອງທ້ອງຖິ່ນ, ລັດວິສາຫະກິດ, ບຸກຄົນ ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຢູ່ ສປປ ລາວ ທີ່ນັບຖື.

**ເລື່ອງ** : ການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງຊັບສິນຂອງລັດ ແລະ ວຽກງານການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ.

- ອີງຕາມ ກົດໝາຍວ່າດ້ວຍ ຊັບສິນຂອງລັດ (ສະບັບປັບປຸງ) ເລກທີ 14/ສພຊ, ລົງວັນທີ 05/07/2012.
- ອີງຕາມ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02/11/2017
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 144/ນຍ, ລົງວັນທີ 08/05/2017
- ອີງຕາມ ບົດລາຍງານຂອງກົມຄຸ້ມຄອງຊັບສິນຂອງລັດ ສະບັບເລກທີ 0807/ຄຊລ, ລົງວັນທີ 05 ເມສາ 2021.

ເພື່ອເຮັດໃຫ້ການຄຸ້ມຄອງ ວຽກງານຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ, ປະຕິບັດເປັນເອກະພາບໃນຂອບເຂດທົ່ວປະເທດ, ແນໃສ່ຮັບປະກັນການນຳໃຊ້ທຶນຂອງລັດໃຫ້ມີປະສິດທິພາບ ປະສິດທິຜົນສູງ, ປະຢັດ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້. ກະຊວງການເງິນ, ຈຶ່ງຖືເປັນກຽດແຈ້ງມາຍັງບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ລັດວິສາຫະກິດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ໃຫ້ເອກະພາບກັນ ດັ່ງນີ້:

1. ໃຫ້ສ້າງແຜນ ແລະ ສົ່ງແຜນປະຈຳປີການສ້າງໃໝ່, ສ້ອມແປງອາຄານສິ່ງກໍ່ສ້າງຂອງລັດ, ແຜນຈັດຊື້ໃໝ່, ສ້ອມແປງພາຫະນະ, ພັດສະດຸ ທີ່ນຳໃຊ້ງົບປະມານຂອງລັດ ລວມທັງກອງທຶນຂອງລັດ, ທຶນຂອງລັດວິສາຫະກິດ, ທຶນທີ່ໄດ້ຈາກການຊ່ວຍເຫຼືອລ້າ ແລະ ກູ້ຢືມຈາກຕ່າງປະເທດ ແລະ ສະຖາບັນການເງິນຕ່າງໆ ໃນແຕ່ລະປີ ໃຫ້ກະຊວງການເງິນ(ກົມຄຸ້ມຄອງຊັບສິນຂອງລັດ), ຂັ້ນທ້ອງຖິ່ນແມ່ນສົ່ງໃຫ້ພະແນກການເງິນແຂວງ, ນະຄອນຫຼວງ (ຂະແໜງຄຸ້ມຄອງຊັບສິນຂອງລັດ) ແລະ ຫ້ອງການການເງິນເມືອງ (ໜ່ວຍງານຄຸ້ມຄອງຊັບສິນຂອງລັດ), ສຳລັບການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຂຶ້ນກັບຂະແໜງການໃດແມ່ນສົ່ງໃຫ້ຂະແໜງການນັ້ນ ເພື່ອສັງລວມສົ່ງໃຫ້ຂະແໜງການເງິນ ເພື່ອກວດກາຄວາມຖືກຕ້ອງໃນການຈັດຕັ້ງປະຕິບັດ, ກວດຄືນຈຳນວນທີ່ມີແລ້ວ, ຄວາມຈຳເປັນ, ລາຄາ ໃຫ້ສອດຄ່ອງກັບມາດຖານເຕັກນິກ ແລະ ກຳນົດໝາຍການນຳໃຊ້ຕົວຈິງ ກ່ອນນຳສົ່ງໃຫ້ຂະແໜງງົບປະມານ ສັງລວມລາຍງານລັດຖະບານ ເພື່ອອະນຸມັດ.
2. ການປະມູນຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02/11/2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13/02/2019 ເປັນເອກະພາບໃນຂອບເຂດທົ່ວປະເທດ ຢ່າງເຂັ້ມງວດ.

Scanned with CamScanner

3. ການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງຂະແໜງການຕ່າງໆຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໃຫ້ຂະແໜງທີ່ເປັນເຈົ້າຂອງໂຄງການ ປະສານສົມທົບກັບຂະແໜງການເງິນ ເພື່ອຕິດຕາມກວດກາການ ຈັດຕັ້ງປະຕິບັດຂັ້ນຕອນການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບ ການທີ່ກ່ຽວຂ້ອງ.
4. ເອກະສານຊອງປະມູນແມ່ນໃຫ້ຂາຍໄດ້ສອງບ່ອນຄື: ຂາຍຢູ່ສຳນັກງານເຈົ້າຂອງໂຄງການ ແລະ ຂະແໜງ ການເງິນ ( ຂະແໜງຄຸ້ມຄອງຊັບສິນຂອງລັດ ) ໂດຍບໍ່ໃຫ້ມີການຈຳກັດຈຳນວນການຂາຍເອກະສານຊອງປະມູນ.
5. ພາຍຫຼັງສິ້ນສຸດການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ໃຫ້ສັງລວມສະຖິຕິການຈັດຊື້-ຈັດຈ້າງຂອງຂະແໜງການຕົນແລ້ວສົ່ງໃຫ້ຂະແໜງການເງິນ (ຂະແໜງຄຸ້ມຄອງຊັບສິນຂອງລັດ) ສັງລວມການນຳໃຊ້ງົບປະມານສົມທຽບກັບແຜນທີ່ໄດ້ຮັບອະນຸມັດ ແລະ ປະເມີນການຈັດຕັ້ງປະຕິບັດເພື່ອລາຍງານຕໍ່ຂັ້ນເທິງ.
6. ສຳລັບໂຄງການກໍ່ສ້າງ-ສ້ອມແປງ ທີ່ສິ້ນສຸດໄລຍະຄ້ຳປະກັນໂຄງການ ກ່ອນຈະມອບ-ຮັບໂຄງການ ຕ້ອງໄດ້ມີການກວດກາຢັ້ງຢືນຈາກຂະແໜງການເງິນ ຂັ້ນສູນກາງແມ່ນກົມຄຸ້ມຄອງຊັບສິນຂອງລັດ, ຂັ້ນທ້ອງຖິ່ນແມ່ນຂະແໜງຄຸ້ມຄອງຊັບສິນຂອງລັດແຂວງ, ນະຄອນຫຼວງ ໂດຍປະສານສົມທົບກັບເຈົ້າຂອງໂຄງການ ແລະ ຂະແໜງການທີ່ກ່ຽວຂ້ອງ, ພ້ອມທັງໃຫ້ຂະແໜງຄຸ້ມຄອງຊັບສິນຂອງລັດ ອອກໜັງສືຢັ້ງຢືນຄວາມຖືກຕ້ອງ ແລະ ຂຶ້ນບັນຊີເປັນຊັບສິນຂອງລັດຕາມລະບຽບການ ຈຶ່ງດຳເນີນເອກະສານເພື່ອສົ່ງຄືນເງິນຄ້ຳປະກັນຈາກຂະແໜງການທີ່ກ່ຽວຂ້ອງ.
7. ກໍລະນີກວດເຫັນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ທີ່ລະເມີດຕໍ່ກົດໝາຍວ່າດ້ວຍຊັບສິນຂອງລັດ, ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ລະບຽບການອື່ນໆທີ່ກ່ຽວຂ້ອງ ແລະ ຂໍ້ຜູກພັນສັນຍາຕ່າງໆ; ຂະແໜງການເງິນ ຈະສະເໜີຢຸດຕິຊົ່ວຄາວໃນການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດນັ້ນໆ ເພື່ອຄົ້ນຄວ້າ ແລະ ລາຍງານຂັ້ນເທິງພິຈາລະນາແກ້ໄຂຕາມລະບຽບຫຼັກການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ, ຊີ້ນຳ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊັບສິນຂອງລັດ ແລະ ວຽກງານຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຕາມແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ

ບຸນໂຈມ ອຸບົນປະເສີດ

Scanned with CamScanner